ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ: 55 /ຫກ

ນະຄອນຫລວງວຽງຈັນ, ວັນທີ 1/2/2018

# ແຈ້ງການ

**ເຖິງ :** ບໍລິສັດ, ຕົວແທນຈຳໜ່າຍ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທຸກພາກສ່ວນ

**ເລື່ອງ :** ໃຫ້ຢຸດຕິການນຳເຂົ້າອຸປະກອນຈານຮັບດາວທຽມ ທຸກຊະນິດໄວ້ຊົ່ວຄາວ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 95/ນຍ, ລົງວັນທີ 09/03/2017 ວ່າດ້ວຍ ການຈັດຕັ້ງ ແລະ ການ ເຄື່ອນໄຫວ ຂອງ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
- ອີງຕາມກົດໝາຍວ່າດ້ວຍສື່ມວນຊົນ (ສະບັບປັບປຸງ) ເລກທີ 01/ສພຊ ລົງວັນທີ 04/11/2016.
- ອີງຕາມທິດຊີ້ນຳຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1989/ຫສນຍ.ກຄສ, ລົງວັນທີ 14/12/2017.
- ອີງໃສ່ການຕົກລົງເຫັນດີໃນກອງປະຊຸມປຶກສາຫາລືທາງດ້ານວິຊາການກ່ຽວກັບການຄຸ້ມຄອງ ການນຳເຂົ້າ ແລະ ນຳໃຊ້ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ ( DTH ) ລະຫວ່າງກົມສື່ມວນຊົນ, ກະຊວງ ຖວທ, ກົມໂທລະຄົມມະນາຄົມ, ກະຊວງ ປທສ ແລະ ກະຊວງ ອຸດສາຫະກຳ ແລະ ການຄ້າ ( ກົມນາເຂົ້າ ແລະ ສົ່ງອອກ ) ໃນວັນທີ 12/01/2018.

ເນື່ອງຈາກໄລຍະຜ່ານມາໄດ້ມີການນຳເຂົ້າອຸປະກອນຈານຮັບດາວທຽມບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ ເພື່ອປັບປຸງລະບົບການຄຸ້ມຄອງອຸປະກອນເຄື່ອງຮັບສັນຍານດາວທຽມທຸກຊະນິດ ໃຫ້ເຂົ້າສູ່ລະບົບຫລັກການ, ຖືກຕ້ອງຕາມຄຳສັ່ງແນະນຳ ຂອງທ່ານນາຍົກລັດຖະມົນຕີ ຄັ້ງວັນທີ 24 ພະຈິກ 2017, ຮັບປະກັນໃຫ້ການຈັດຕັ້ງປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງລັດ, ແລະ ເພື່ອຮັບປະກັນສິດຜົນປະໂຫຍດ ຂອງຜູ້ ຊົມໃຊ້ອຸປະກອນຮັບສັນຍານດາວທຽມທຸກຊະນິດ.

ຫ້ອງການກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງຂໍແຈ້ງມາຍັງບໍລິສັດ, ຫ້າງຮ້ານ, ຕົວແທນຈຳໜ່າຍ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທຸກພາກສ່ວນ ໃນຂອບເຂດທົ່ວປະເທດ ທີ່ເຮັດທຸລະກິດດ້ານການນຳເຂົ້າ, ຈຳໜ່າຍ ແລະ ບໍລິການຕິດຕັ້ງ ອຸປະກອນຈານຮັບດາວທຽມທຸກຊະນິດ ຢູ່ໃນ ສປປລາວ ໃຫ້ຢຸດຕິ ການນຳເຂົ້າ, ອຸປະກອນຈານດາວທຽມຂອງຕ່າງປະເທດໄວ້ຊົ່ວຄາວກ່ອນ ນັບແຕ່ວັນທີ່ 01 ກຸມພາ 2018 ເປັນຕົ້ນໄປ.

ສຳລັບຜູ້ປະກອບການທີ່ ໄດ້ນຳເຂົ້າ ແລະ ຄອບຄອງອຸປະກອນດັ່ງກ່າວເພື່ອບໍລິການລູກຄ້ານັ້ນໃຫ້ມາ ແຈ້ງການດຳເນີນກິດຈະການຂອງຕົນເອງຢ່າງຮີບດ່ວນດັ່ງນີ້ :

1. ສຳລັບຜູ້ປະກອບການຢູ່ໃນນະຄອນຫລວງໃຫ້ມາແຈ້ງນຳ ກະຊວງ ຖວທ, ກົມສື່ມວນຊົນ ພະແນກ ດາວທຽມ ຫລື ພະແນກຖວທ ນະຄອນຫລວງ.
2. ຜູ້ປະກອບການນຳເຂົ້າ,ຈຳໜ່າຍອຸປະກອນຮັບສັນຍານຈານດາວທຽມຢູ່ຕ່າງແຂວງໃຫ້ມາແຈ້ງນຳພະແນກ ຖວທ ແຂວງ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນປະຕິບັດຢ່າງເຂັ້ມງວດ.

ບ່ອນສົ່ງ

| | |
|---|---|
| - ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ | 01 ສະບັບ ( ເພື່ອຊາບ ) |
| - ຫ້ອງການກະຊວງ ການເງິນ | 01 ສະບັບ ( ເພື່ອຊາບ ) |
| - ຫ້ອງການກະຊວງ ປທສ ແລະ(ກົມຄົ້ນຄວາມຖີ່) | 01 ສະບັບ ( ເພື່ອຊາບ ) |
| - ພະແນກ ຖວທ ແຂວງ, ນະຄອນຫລວງ | 01 ສະບັບ ( ເພື່ອຊາບ ) |
| - ເກັບມ້ຽນ | 01 ສະບັບ ( ເພື່ອຊາບ ) |

ຮອງ/ແທນ ຫົວໜ້າຫ້ອງການ

ບົວໄລ ພານຸວົງ